" ຍຸດທະສາດ ສ້າງຄົນ ສ້າງອົງກອນ ສູ່ປະຊາຄົມ ເສດຖະກິດ ອາຊຽນ "

*(Strategies to Build People-Build Organizations to ASEAN Economic Community)*

## *Break Through ASEAN*

# ບຸກທະລຸ ອາຊຽນ

**AEC** ບໍ່ຮູ້ ບໍ່ໄດ້...

"ເຜົ່າພັນທີ່ຢູ່ລອດໄດ້ ບໍ່ແມ່ນເຜົ່າພັນທີ່ແຂງແຮງທີ່ສຸດ ຫຼື ສະຫຼາດທີ່ສຸດ, ແຕ່ເປັນເຜົ່າພັນທີ່ສາມາດປັບຕົວ ເພື່ອການປ່ຽນແປງໄດ້ດີທີ່ສຸດ"

*"It is not the strongest of species that survives, nor the most intelligent that survives. It is the one that is most adaptable to change" By Charles Darwin*

ໂດຍ: ກາບແກ້ວ ທ່າມະວົງ



# ອຸປະຖຳໂດຍ:

"ຍຸດທະສາດ ສ້າງຄົນ ສ້າງອົງກອນ ສູ່ປະຊາຄົມ ເສດຖະກິດ ອາຊຽນ"

*(Strategies to Build People-Build Organizations to ASEAN Economic Community)*

# Break through ASEAN

asean

# ບຸກທະລຸ ອາຊຽນ

ນະຄອນຫຼວງວຽງຈັນ, 2014

ປື້ມ: ບຸກທະລຸ ອາຊຽນ
ພິມເປັນພາສາ: ລາວ
ອົງການທີ່ຈັດພິມ: ສໍານັກພິມ ແສງສຸວັນ
ຄະນະທີ່ປຶກສາ: ທ່ານ ພົງສະຫວັນ ສີສຸລາດ, ທ່ານ ດຣ. ລີເບີ ລີບົວປາວ, ທ່ານ ພົງສະຫວັນ ພິມກອງ, ທ່ານ ບຸນເລີດ ຫຼວງປະເສີດ, ທ່ານ ກຽດຕິສັກ ແສນພັນສີຣິ
ຊື່ຜູ້ແຕ່ງ/ຮຽບຮຽງ: ກາບແກ້ວ ທໍາມະວົງ
ອອກແບບໜ້າປົກໂດຍ: ທ່ານ ນາງ ສິດທິພອນ ອຸບປະສິດ
ບັນນາທິການ: ທ່ານ ອ.ຈ ກົງເດືອນ ເນດຕະວົງ
ກວດແກ້ພາສາລາວ : ທ່ານ ອ.ຈ ກົງເດືອນ ເນດຕະວົງ
ຂະໜາດພິມ: 14 x 21 ຊມ
ຈໍານວນໜ້າ: 189 ໜ້າ
ຈໍານວນພິມ: 10,000 ຫົວ
ພິມທີ່: ໂຮງພິມ ແມັກມີເດຍ
ເລກທະບຽນພິມ: 331/ພຈ23072014
ຈຸດປະສົງການພິມ: ເພື່ອແຈກຢາຍລ້າ ແລະ ຂາຍ
ພິມຄັ້ງທີ: I

ຈໍາໜ່າຍໂດຍ: **ບໍລິສັດ ແມັກມີເດຍ ຈໍາກັດ**
ບ້ານ ສີບຸນເຮືອງ, ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ.
**ໂທ**: 020 77075 999, **ອີເມວ**: kabkeo.ltd@gmail.com

# ຄຳເຫັນ

## ຂອງ ທ່ານ ລັດຖະມົນຕີ ປະຈຳຫ້ອງວ່າການລັດຖະບານ, ປະທານຄະນະກຳມະການປັບປຸງທຸລະກິດແຫ່ງຊາດ

ກ່ອນອື່ນ, ຂ້າພະເຈົ້າຂໍສະແດງຄວາມຍ້ອງຍໍຊົມເຊີຍ ແລະ ຕີລາຄາສູງຕໍ່ ທ່ານ ກາບແກ້ວ ທຳມະວົງ ທີ່ໄດ້ພະຍາຍາມລວບລວມບັນຫາກ່ຽວກັບ ASEAN ແລະ ຄວາມຮູ້ຕ່າງໆ ເພື່ອໂຄສະນາໃຫ້ສັງຄົມຮູ້ຈັກກ່ຽວກັບ ASEAN ແລະ ບາດກ້າວການສ້າງປະຊາຄົມ ເສດຖະກິດ ASEAN ສູ່ 2015. ຂໍ້ມູນທັງຫຼາຍທັງປວງໃນປຶ້ມຫົວນີ້ ລ້ວນແຕ່ມີຄ່າສູງສຳລັບພະນັກງານລັດຖະກອນ, ນັກບໍລິຫານທຸລະກິດ ຕະຫຼອດຮອດທຸກຊັ້ນຄົນໃນສັງຄົມຂອງປະເທດເຮົາ. ຂ້າພະເຈົ້າຄິດວ່າ ປຶ້ມຫົວນີ້ ຈະຊ່ວຍໃຫ້ສັງຄົມຂອງພວກເຮົາ ໂດຍສະເພາະພາກທຸລະກິດ, ຜູ້ປະກອບການ, ຜູ້ຜະລິດ ຕະຫຼອດຮອດຊາວກະສິກອນ ມີຄວາມຮັບຮູ້ ແລະ ເຂົ້າໃຈ, ເຫັນໄດ້ຜົນປະໂຫຍດ, ຄວາມຈຳເປັນ ແລະ ສິ່ງທ້າທາຍຈາກນີ້ ຈະມີຄວາມກະກຽມຄວາມພ້ອມ ເພື່ອການເຂົ້າຮ່ວມການສ້າງປະຊາຄົມ ເສດຖະກິດອາຊຽນ ຂອງປະເທດເຮົາ ໃຫ້ໄດ້ຮັບຜົນປະໂຫຍດສູງສຸດ.

ນະໂອກາດນີ້, ຂໍອວຍພອນໃຫ້ ທ່ານ ກາບແກ້ວ ທຳມະວົງ ຈົ່ງມີສຸຂະພາບເຂັ້ມແຂງ, ສືບຕໍ່ສຶກສາ ແລະ ປະກອບສ່ວນດ້ານການຂຽນ, ຈັດພິມເອກະສານ, ປຶ້ມທີ່ມີຄຸນຄ່າອອກສູ່ສັງຄົມ ໃຫ້ນັບມື້ນັບຫຼາຍຂຶ້ນ. ຂໍໃຫ້ທ່ານຈົ່ງສຳເລັດໃນການຂຽນຂອງທ່ານ ຕາມທີ່ທ່ານປະສົງໄວ້ທຸກປະການ.

ນະຄອນຫຼວງວຽງຈັນ, ວັນທີ 09/06/2014

**ທ່ານ ດຣ. ບານ ວິຍະເກດ**

**ລັດຖະມົນຕີ ປະຈຳຫ້ອງວ່າການລັດຖະບານ,**

**ປະທານຄະນະກຳມະການປັບປຸງທຸລະກິດແຫ່ງຊາດ**

# ຄຳເຫັນ

## ຂອງ ທ່ານ ທອງພັນກົມ ອາຊຽນ, ກະຊວງການຕ່າງປະເທດ

ການສ້າງປະຊາຄົມເສດຖະກິດອາຊຽນ ຈະບໍ່ຈົບພາຍໃນ ປີ 2015 ເທົ່ານັ້ນ, ແຕ່ຍັງຈະສືບຕໍ່ເປັນຂະບວນການຕໍ່ໄປ ແລະ ການສ້າງປະຊາຄົມນີ້ ແມ່ນຕິດພັນຢ່າງສະໜິດແໜ້ນກັບຜົນປະໂຫຍດລວມຂອງແຕ່ລະປະເທດສະມາຊິກ. ໃນເວລາດຽວກັນນັ້ນ, ຂອບການຮ່ວມມືໃນຂົງເຂດເສດຖະກິດອາຊຽນ ນັບມື້ນັບລົງເລິກ ແລະ ກ້ວາງອອກໄປ ແລະ ຈະກ້າວເຂົ້າສູ່ການເປັນຕະຫຼາດ ແລະ ຖານການຜະລິດໜຶ່ງດຽວ ທີ່ມີການໄຫຼວຽນຢ່າງເສລີຂອງສິນຄ້າ, ການບໍລິການ, ການລົງທຶນ, ການໄຫຼວຽນຢ່າງເສລີຂອງທຶນ, ການໄຫຼວຽນຢ່າງເສລີຂອງແຮງງານທີ່ມີສີມື ແລະ ກາຍເປັນພາກພື້ນທີ່ມີການແຂ່ງຂັນສູງທາງດ້ານເສດຖະກິດ. ສະນັ້ນການກະກຽມພະນັກງານທີ່ມີຄວາມຮູ້ ຄວາມສາມາດ ແມ່ນມີຄວາມຈຳເປັນທີ່ສຸດ ສຳລັບ ສປປ ລາວ, ເປັນຕົ້ນແມ່ນ: ພາສາຕ່າງປະເທດ, ບຸກຄະລາກອນທີ່ມີຄວາມຮູ້ທາງດ້ານການຄ້າ ແລະ ເສດຖະກິດ ລວມທັງການຮູ້ນຳໃຊ້ເທັກໂນໂລຍີທັນສະໄໝ. ເວົ້າລວມແລ້ວ ແມ່ນສ້າງພະນັກງານ ທັງພາກລັດ ແລະ ພາກທຸລະກິດ ໃຫ້ພຽງພໍທາງດ້ານປະລິມານ ແລະ ຄຸນນະພາບ ໃນໄລຍະປັດຈຸບັນ ກໍຄືອະນາຄົດຂ້າງໜ້າ ເພື່ອແນໃສ່ຮັບມື ແລະ ຜ່ານຜ່າບັນດາສິ່ງທ້າທາຍຕ່າງໆ ໃນທ່າມກາງການເຂົ້າຮ່ວມປະຊາຄົມເສດຖະກິດອາຊຽນ ໃນປີ 2015 ແລະ ຫຼັງປີ 2015. ພ້ອມດຽວກັນນີ້, ບັນດາຫົວໜ່ວຍທຸລະກິດ ແລະ ບັນດາຜູ້ປະກອບການຂອງ ສປປ ລາວ ຈຳເປັນຕ້ອງໄດ້ຊອກຮູ້ ແລະ ເຂົ້າໃຈກ່ຽວກັບເນື້ອໃນ ແລະ ລະບຽບການຕ່າງໆ ທີ່ຢູ່ພາຍໃຕ້ປະຊາຄົມເສດຖະກິດອາຊຽນ, ເຂດການຄ້າເສລີ ລະຫວ່າງອາຊຽນ ແລະ ບັນດາຄູ່ເຈລະຈາ ໂດຍສະເພາະແມ່ນ: ສປ. ຈີນ, ຍີ່ປຸ່ນ, ສ. ເກົາຫຼີ, ອິນເດຍ ແລະ ອົສຕຣາລີ-ນິວຊີແລນ ແລະ ອົງການການຄ້າໂລກ. ປັດຈຸບັນ ອາຊຽນກຳລັງຂຸ້ນຂ້ຽວເຈລະຈາການເປັນ **"ຄູ່ຮ່ວມເສດຖະກິດ**

**ແບບຮອບດ້ານຂອງພາກພື້ນ: RCEP"** ລະຫວ່າງ 10 ປະເທດອາຊຽນ ກັບ 6 ປະເທດຄູ່ເຈລະຈາ ເຊິ່ງໄດ້ເລີ່ມເຈລະຈາມາແຕ່ປີ 2013 ແລະ ຄາດວ່າຈະໃຫ້ສຳເລັດພາຍໃນປີ 2015 ໂດຍມີຈຸດປະສົງ ເພື່ອໃຫ້ບັນລຸການເປັນເຂດການຄ້າເສລີທີ່ກວ້າງໃຫຍ່, ມີປະສິດທິພາບ ແລະ ເອື້ອຜົນປະໂຫຍດຮ່ວມກັນ ໃນການເປັນຄູ່ຮ່ວມເສດຖະກິດດັ່ງກ່າວ.

ດ້ວຍເຫດນີ້, ຂ້າພະເຈົ້າຫວັງວ່າ ການເປັນປະຊາຄົມເສດຖະກິດອາຊຽນ ຈະຊ່ວຍເປີດໂອກາດອັນດີ ໃຫ້ແກ່ບັນດາຫົວໜ່ວຍທຸລະກິດ ແລະ ຜູ້ປະກອບການຂອງ ສປປ ລາວ ຈະໄດ້ມີໂອກາດປັບປຸງຄຸນນະພາບ, ປະສິດທິພາບຂອງການຜະລິດ ແລະ ການບໍລິການຂອງຕົນ ເພື່ອໃຫ້ສາມາດແຂ່ງຂັນ ແລະ ຮ່ວມມືກັບທຸລະກິດຂ້າມຊາດໄດ້. ນອກຈາກນັ້ນ, ຍັງເປັນໂອກາດທີ່ຈະເຮັດໃຫ້ພວກເຮົາສາມາດເຂົ້າເຖິງຕະຫຼາດອາຊຽນ ທີ່ມີປະຊາກອນຫຼາຍກວ່າ 600 ລ້ານຄົນ ກໍຄືການເຂົ້າເຖິງຕະຫຼາດຂອງບັນດາປະເທດຄູ່ຮ່ວມເຈລະຈາອາຊຽນ.

ສຸດທ້າຍນີ້, ຂ້າພະເຈົ້າເຊື່ອໝັ້ນວ່າ ປຶ້ມຫົວນີ້ ນອກຈາກຈະເປັນການສະໜອງຂໍ້ມູນພື້ນຖານທີ່ສຳຄັນ ແລະເປັນປະໂຫຍດແລ້ວ ແຕ່ຍັງເປັນການປະກອບສ່ວນຢ່າງກວ້າງຂວາງ ເຂົ້າໃນການໂຄສະນາ ແລະ ສ້າງຄວາມເຂົ້າໃຈ ໃຫ້ກັບປວງຊົນລາວທັງຊາດ ກ່ຽວກັບອາຊຽນ ກໍຄືຄວາມກຽມພ້ອມຂອງ ສປປ ລາວ ໃນການເຂົ້າຮ່ວມປະຊາຄົມອາຊຽນ ປີ 2015. ພ້ອມກັນນີ້, ກໍຫວັງວ່າ ບັນດາພາກທຸລະກິດ ແລະ ຜູ້ປະກອບການຂອງ ສປປ ລາວ ຈະມີຄວາມເຂົ້າໃຈຕໍ່ເງື່ອນໄຂ ແລະ ລະບຽບການຕ່າງໆຂອງປະຊາຄົມເສດຖະກິດອາຊຽນ ກໍຄືອົງການການຄ້າໂລກ ເພື່ອເປັນບ່ອນອີງໃນການກະກຽມຄວາມພ້ອມ ໃນດ້ານຕ່າງໆຂອງທຸລະກິດຕົນ ໃຫ້ສາມາດປັບຕົວເຂົ້າກັບສະພາບການໃໝ່ ແລະ ສາມາດເຊື່ອມໂຍງເຂົ້າກັບເສດຖະກິດຂອງພາກພື້ນ ແລະ ສາກົນ ໄດ້ຢ່າງຄ່ອງແຄ້ວ.

ນະຄອນຫຼວງວຽງຈັນ, ວັນທີ 30/06/2014

**ທ່ານ ພົງສະຫວັນ ສິສຸລາດ**

**ຫົວໜ້າກົມ ອາຊຽນ, ກະຊວງການຕ່າງປະເທດ**

# ຄຳເຫັນ

## ຂອງທ່ານຫົວໜ້າ ສະຖາບັນຄົ້ນຄວ້າ ເສດຖະກິດ ແຫ່ງຊາດ

ຂ້າພະເຈົ້າຂໍສະແດງຄວາມຊົມເຊີຍ ແລະ ຕີລາຄາສູງຕໍ່ ທ່ານ ກາບແກ້ວ ທຳມະວົງ, ນັກຂຽນທີ່ໄດ້ຮັບລາງວັນ **"ນາກຄຳລາວເອັນເຕີເຫັນເມັນປະຈຳປີ 2011-2012, ປະເພດນັກຂຽນດີເດັ່ນ"** ແລະ **"ລາງວັນຜູ້ບໍລິຫານດີເດັ່ນແຫ່ງການປຸ່ງແປງໃໝ່"** ປີ 2013 ທີ່ໄດ້ໃຊ້ສະຕິປັນຍາຂອງຜູ້ກ່ຽວຂຽນປຶ້ມ **"ບຸກທະລຸອາຊຽນ"**. ຂ້າພະເຈົ້າເຫັນວ່າ ຫົວຂໍ້ ແລະ ເນື້ອໃນທີ່ຜູ້ຂຽນສະເໜີໃນປຶ້ມຫົວນີ້ ແມ່ນບັນຫາໃໝ່ອັນໜຶ່ງສຳລັບປະເທດເຮົາ ເຊິ່ງມີຄວາມສຳຄັນແລະມີປະໂຫຍດທີ່ຄົນລາວເຮົາທຸກຄົນຄວນຈະຕ້ອງມີຄວາມເຂົ້າໃຈ ເພື່ອຮູ້ປັບຕົວ, ເນື່ອງຈາກໃນປີ 2015 ປະເທດເຮົາຈະໄດ້ເຂົ້າຮ່ວມປະຊາຄົມເສດຖະກິດອາຊຽນ, ເຊິ່ງເປັນເຫດການໃໝ່ ອັນຫນຶ່ງສຳລັບປະເທດເຮົາ. ການເຂົ້າຮ່ວມປະຊາຄົມດັ່ງກ່າວຈະມີທັງກາລະໂອກາດອັນໃໝ່ ແລະ ມີສິ່ງທ້າທາຍສຳລັບແຕ່ລະຄົນໃນລະດັບທີ່ແຕກຕ່າງກັນຫຼາຍ, ນັ້ນຂຶ້ນຢູ່ກັບຄວາມເຂົ້າໃຈ, ຄວາມພ້ອມ ແລະ ຄວາມສາມາດປັບຕົວ ຫຼາຍ ຫລື ນ້ອຍ. ດັ່ງນັ້ນ, ປຶ້ມຫົວນີ້ຈະໃຫ້ປະໂຫຍດສຳລັບທ່ານໃດທີ່ສົນໃຈອ່ານປຶ້ມຫົວນີ້.

ນອກຈາກຫົວຂໍ້ດັ່ງກ່າວ, ຜູ້ຂຽນຍັງໄດ້ສະເໜີຜົນຄົ້ນຄວ້າໃນຫົວຂໍ້ອື່ນໆອີກທີ່ມີຄວາມສຳຄັນ ແລະ ເປັນປະໂຫຍດ. ຂ້າພະເຈົ້າຂໍອວຍພອນໃຫ້ ທ່ານ ກາບແກ້ວ ທຳມະວົງ ຈົ່ງມີສຸຂະພາບເຂັ້ມແຂງ, ມີສະຕິປັນຍາດີ ເພື່ອສືບຕໍ່ຄົ້ນຄວ້າ ແລະ ສະໜອງຄວາມຮູ້ໃໝ່ໆ ທີ່ເປັນໂຫຍດໃຫ້ແກ່ສັງຄົມລາວຫຼາຍຕື່ມ ແລະ ໃຫ້ຜູ້ກ່ຽວຈົ່ງມີຜົນສຳເລັດໃນໜ້າທີ່ການງານຕ່າງໆຍິ່ງໃຫຍ່ກວ່າເກົ່າຕະຫລອດໄປໃນອະນາຄົດ.

ນະຄອນຫຼວງວຽງຈັນ, ວັນທີ 25/06/2014

**ທ່ານ ດຣ. ລີເບີ ລີບົວປາວ**

**ຫົວໜ້າ ສະຖາບັນ ຄົ້ນຄວ້າເສດຖະກິດແຫ່ງຊາດ**

**ກະຊວງແຜນການ ແລະ ການລົງທຶນ**

# <u>ຄຳເຫັນຂອງບັນດາທ່ານກິດຕິຄຸນ</u>

"ການກຽມຕົວທີ່ດີ ແລະ ກ້າທີ່ຈະລົງມືນັ້ນ ແມ່ນໄຊຊະນະເຄິ່ງທາງແລ້ວ"

**ທ່ານ ກິດສະໜາ ວົງໄຊ**

**ປະທານ ກິດຕິມະສັກ ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ**

**ຜູ້ອຳນວຍການໃຫຍ່, ບໍລິສັດ ເບຍລາວ ຈຳກັດ**

"ປື້ມ **ບຸກທະລຸ ອາຊຽນ** ແມ່ນການສະຫຼຸບລວມຍອດກາລະໂອກາດ ແລະ ສິ່ງທ້າທາຍຕ່າງໆຂອງ ສປປ ລາວ ສູ່ປະຊາຄົມເສດຖະກິດ ອາຊຽນ ໃນປີ 2015 ທີ່ຈະມາເຖິງນີ້ ລວມທັງບອກວິທີການກະກຽມຄວາມພ້ອມຂອງຄົນລາວ ແລະ ຫົວໜ່ວຍທຸລະກິດໄດ້ເປັນຢ່າງດີ ແລະ ແຊກຊ້ອນດ້ວຍປັດຊະຍາທີ່ມີຄຸນຄ່າສູງ.

ສະນັ້ນ, ປື້ມເຫຼັ້ມນີ້ ຈຶ່ງມີຄຸນປະໂຫຍດຢ່າງຍິ່ງສຳລັບຜູ້ປະກອບການ, ນັກທຸລະກິດ, ນັກບໍລິຫານ ແລະ ທຸກຄົນທີ່ສົນໃຈ ເຖິງການຮຽນຮູ້ກ່ຽວກັບອາຊຽນ ແລະ ວິທີການກະກຽມຄວາມພ້ອມ ສູ່ປະຊາຄົມເສດຖະກິດ ອາຊຽນ".

ຫ້າມຈຳໜ່າຍ

**ທ່ານ ສີສະຫວາດ ທິຣະວົງ**

**ປະທານ ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ**

**ຜູ້ອຳນວຍການໃຫຍ່, ລັດວິສາຫະກິດ ໄຟຟ້າລາວ**

"ການເປີດປະຊາຄົມເສດຖະກິດອາຊຽນ ຫຼື AEC ໃນທ້າຍປີ 2015 ຈະເປັນໄດ້ທັງກາລະໂອກາດ ແລະ ສິ່ງທ້າທາຍສຳລັບບັນດາຜູ້ປະກອບການ ແລະ ທຸລະ

ກິດຂອງບັນດາປະເທດໃນອາຊຽນ ລວມທັງ ສປປ ລາວ ຂອງພວກເຮົາ. ແຕ່ຄວາມຮັບຮູ້ ແລະ ແຫຼ່ງຂໍ້ມູນກ່ຽວກັບ AEC ສໍາລັບສັງຄົມລາວເຮົາ ແມ່ນຍັງມີຢ່າງຈໍາກັດ ໂດຍສະເພາະແມ່ນແຫຼ່ງຂໍ້ມູນທີ່ເປັນພາສາລາວ.

ປຶ້ມເຫຼັ້ມນີ້ ໄດ້ນໍາສະເໜີຄວາມຮູ້ພື້ນຖານທີ່ສໍາຄັນ ກ່ຽວກັບ ອາຊຽນ ແລະ AEC ໃຫ້ແກ່ທ່ານຜູ້ອ່ານ ພ້ອມທັງໄດ້ໃຫ້ບົດຮຽນ ແລະ ປັດຊະຍາໃນການດໍາເນີນທຸລະກິດຫຼາຍໆອັນ ເຊິ່ງບັນດານັກບໍລິຫານ, ຜູ້ປະກອບການ ແລະ ພາກທຸລະກິດຂອງພວກເຮົາ ສາມາດນໍາມາໝູນໃຊ້ ແລະ ພັດທະນາຄວາມພ້ອມຂອງຕົນເອງ ເພື່ອກ້າວເຂົ້າສູ່ AEC ດ້ວຍບາດກ້າວທີ່ໜັກແໜ້ນ ແລະ ໝັ້ນຄົງ".

**ທ່ານ ວັນຄໍາ ວໍຣະວົງ**

**ຜູ້ອໍານວຍການໃຫຍ່, ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ**

"ປຶ້ມຫົວນີ້ ຖືວ່າເປັນເມນູອາຫານເພື່ອສຸຂະພາບໃຫ້ກັບສະໝອງຜູ້ອ່ານໄດ້ດີ. ປະຈຸບັນນີ້ ປຶ້ມເປັນພາສາລາວທີ່ນໍາສະເໜີປະເດັນສໍາຄັນລະດັບພາກພື້ນ ແລະ ສາກົນ ຍັງບໍ່ທັນມີຫຼາຍເທົ່າທີ່ຄວນ, ປຶ້ມເຫຼັ້ມນີ້ ໃຫ້ມູມມອງທີ່ໜ້າສົນໃຈສໍາລັບຜູ້ອ່ານຄົນລາວ ທີ່ຢາກຮຽນຮູ້ກ່ຽວກັບ AEC. ຜູ້ຂຽນໄດ້ນໍາສະເໜີຄວາມເປັນມາກ່ຽວກັບ AEC ແລະ ໃຫ້ແນວຄວາມຄິດຈໍານວນໜຶ່ງແກ່ຜູ້ປະກອບການເພື່ອນໍາໃຊ້ເຂົ້າໃນການກຽມຄວາມພ້ອມໃຫ້ແກ່ທຸລະກິດຂອງຕົນ. ບາງຂໍ້ມູນ ແລະ ບົດຮຽນຕົວຈິງທີ່ໄດ້ຖືກຍົກຂຶ້ນມາແລກປ່ຽນ, ເຮັດໃຫ້ປຶ້ມເຫຼັ້ມນີ້ເປັນແຫຼ່ງຂໍ້ມູນທີ່ດີອັນໜຶ່ງ. ຂ້າພະເຈົ້າເຊື່ອວ່າ ຜູ້ອ່ານຈະໄດ້ຮັບຄວາມຮູ້ໃໝ່ກ່ຽວກັບ AEC ຈາກປຶ້ມເຫຼັ້ມນີ້."

**ທ່ານ ພົງສະຫວັນ ພົມກອງ**

**ຫົວໜ້າຫ້ອງການ ອົງການ ການເງິນສາກົນ (IFC) ປະຈໍາ ສປປ ລາວ**

"ປຶ້ມເຫຼັ້ມນີ້ ຖືວ່າເປັນຕຳລາ ທີ່ບຸກທະລຸວິໄສທັດ ວຽກງານການບໍລິຫານ ເຊິ່ງມັນໄດ້ຊີ້ໃຫ້ເຫັນເຖິງບັນຫາສິ່ງທ້າທາຍ ແລະ ກາລະໂອກາດຂອງການເຊື່ອມໂຍງເສດຖະກິດອາຊຽນ ທີ່ກຳລັງເຄັ່ງຮ້ອນ ໃນປັດຈຸບັນ.

ຂ້າພະເຈົ້າເຫັນວ່າ ປຶ້ມເຫຼັ້ມນີ້ໄດ້ມີການພັດທະນາການຈາກການຮວບຮວມບັນດາສິ່ງຍອດຍິ່ງຈາກປຶ້ມຫຼາຍເຫຼັ້ມ ແລະ ເປັນການຈັດພິມ ເປັນເຫຼັ້ມທີ 5 ຂອງຜູ້ຂຽນ ເຊິ່ງມັນຈະກາຍເປັນຕຳລາທີ່ເຮັດໃຫ້ຜູ້ອ່ານໄດ້ຮັບຮູ້ເອົາສິ່ງທີ່ເປັນປະໂຫຍດຫຼາກຫຼາຍ ໂດຍສະເພາະແລ້ວ ຕໍ່ກັບອົງກອນ ຫຼື ຜູ້ປະກອບການຕ່າງໆ ຈະໄດ້ມີວິໄສທັດທີ່ດີກວ່າ ເພື່ອກ້າວໄປສູ່ຄວາມສຳເລັດຢ່າງຍືນຍົງຂອງນັກພັດທະນາໃນອະນາຄົດ. ຜູ້ອ່ານຍັງສາມາດຄົ້ນພົບເຖິງວິທີການ ແລະ ແບບແຜນໃໝ່ໆທີ່ມີປະສິດທິພາບທີ່ດີກວ່າເກົ່າ ແລະ ທັງເປັນການຮຽນຮູ້ ການປັບຕົວຕໍ່ສະພາບການປ່ຽນແປງທີ່ໄວວາຂອງໂລກໃນປັດຈຸບັນ. ປຶ້ມເຫຼັ້ມນີ້ ຍັງໄດ້ໃຫ້ຄວາມຮູ້ຂອງການສ້າງນະວັດຕະກຳ ແລະ ຊີ້ໃຫ້ເຫັນເຖິງວິໄສທັດທີ່ເປັນອັນສຸດຍອດຂອງບັນດາຜູ້ນຳທາງເສດຖະກິດ, ການເມືອງ ແລະ ສັງຄົມ-ວັດທະນະທຳໃນແຕ່ລະໄລຍະ, ເພາະວ່າໄດ້ສັງລວມເອົາຄຳເວົ້າ, ບົດຄວາມຂອງບັນດານັກຂຽນ, ນັກກະວີ, ນັກປັດຊະຍາ, ລວມທັງບັນດານັກປາດ ທັງຂົງເຂດເສດຖະກິດ ແລະສັງຄົມ-ວັດທະນະທຳ ທີ່ມີຊື່ສຽງລະດັບໂລກ ແລະ ຍັງໄດ້ກ່າວໃຫ້ຮູ້ເຖິງການຫັນເອົາວິກິດການຕ່າງໆ ໃຫ້ເປັນໂອກາດ ໃນການແກ້ໄຂບັນຫາ ໃຫ້ດີຂຶ້ນ.

ໂອກາດນີ້ ຂ້າພະເຈົ້າຂໍສະແດງຄວາມຊົມເຊີຍຢ່າງຈິງໃຈຕໍ່ຜູ້ຂຽນໃນການທີ່ໄດ້ຮວບຮວມແຫຼ່ງຄວາມຮູ້ຕ່າງໆທີ່ສຳຄັນໃນພາກພື້ນ ແລະໃນໂລກມາຢູ່ໃນປຶ້ມເຫຼັ້ມນີ້ ແລະ ມັນໄດ້ເຮັດໃຫ້ການເບິ່ງໂລກຂອງພວກເຮົາໃນແງ່ດີ ມີຄວາມສ້າງສັນ ຕໍ່ການກ້າວໄປສູ່ປະຊາຄົມເສດຖະກິດອາຊຽນ".

**ທ່ານ ບຸນເລີດ ຫຼວງປະເສີດ**

**ປະທານ ກຸ່ມບໍລິສັດ ຫຼວງປະເສີດ**

# ຄຳນຳຂອງຜູ້ຂຽນ

ໃນປີ 1984 ວາລະສານ ນິກເຄອິ (Nikkei) ປະເທດ ຍີ່ປຸ່ນ ໄດ້ວິໄຈອອກມາວ່າ "**ທຸລະກິດມີຊີວິດຢູ່ໄດ້ພຽງແຕ່ 30 ປີ**" ຍ້ອນໄດ້ສຳຫຼວດບໍລິສັດຍັກໃຫຍ່ຂອງໂລກ ຈຳນວນ 100 ບໍລິສັດ ເປັນເວລາ 100 ກວ່າປີ ເຊິ່ງປະກົດວ່າ "**ສ່ວນຫຼາຍບໍລິສັດມີຄວາມຈະເລີນຮຸ່ງເຮືອງ ໂດຍສະເລ່ຍແລ້ວ ເປັນໄລຍະເວລາ ບໍ່ເກີນ 30 ປີ**". ຈຶ່ງເປັນຄຳເວົ້າທີ່ຮຸນແຮງຫຼາຍສຳລັບອົງກອນທຸລະກິດ ແລະ ເປັນຄວາມຈິງທີ່ຄົນເຮົາຍັງບໍ່ສາມາດຍອມຮັບໄດ້ເທື່ອ. ຍິ່ງໄປກວ່ານັ້ນ ສະພາບການຂອງໂລກໃນປັດຈຸບັນນີ້ ແມ່ນມີການປ່ຽນແປງໄວກວ່າ ປີ 1984 ໂດຍສະເພາະແມ່ນ 10 ປະເທດໃນອາຊຽນຈະລວມກຸ່ມເປັນ **ປະຊາຄົມເສດຖະກິດອາຊຽນ** ຫຼື AEC ໃນປີ 2015 ນີ້ ທຸລະກິດຍິ່ງຈະແຂ່ງຂັນຮຸນແຮງຂຶ້ນກວ່າເກົ່າ ເຊິ່ງອາດຈະເຮັດໃຫ້ຫຼາຍອົງກອນມີຊີວິດຢູ່ບໍ່ຮອດ 30 ປີ ກໍເປັນໄປໄດ້ ໂດຍສະເພາະແມ່ນອົງກອນທີ່ບໍ່ສາມາດປັບຕົວ ເພື່ອການປ່ຽນແປງໃຫ້ເຂົ້າກັບສະພາບແວດລ້ອມໃໝ່ໄດ້ນັ້ນ ໂອກາດທີ່ຈະລົ້ມລະລາຍໄປຕາມການເວລາ ກໍຍິ່ງມີສູງຂຶ້ນໄປຕື່ມອີກ ຄືດັ່ງທ່ານ ຈາຣ໌ເລສ໌ ດາຣ໌ວິນ (Charles Darwin) ນັກວິທະຍາສາດທີ່ມີຊື່ສຽງຂອງໂລກກ່າວວ່າ "**ເຜົ່າພັນທີ່ຢູ່ລອດໄດ້ ບໍ່ແມ່ນເຜົ່າພັນທີ່ແຂງແຮງທີ່ສຸດ ຫຼື ສະຫຼາດທີ່ສຸດ, ແຕ່ເປັນເຜົ່າພັນທີ່ສາມາດປັບຕົວ ເພື່ອການປ່ຽນແປງໄດ້ດີທີ່ສຸດ**" ຫຼື "**It is not the strongest of species that survives, nor the most intelligent that survives. It is the one that is most adaptable to change**".

ແຕ່ກໍເປັນຕາໜ້າເສຍດາຍ ທີ່ມີຜູ້ບໍລິຫານຈຳນວນໜຶ່ງຢູ່ໃນປະເທດລາວເຮົາແມ່ນຍັງບໍ່ສາມາດຍອມຮັບ "**ກົດເກນແຫ່ງວິວັດທະນາການ**" ຂໍ້ນີ້ໄດ້ເທື່ອ ໂດຍບໍ່ສົນໃຈປັບຕົວ ເພື່ອປ່ຽນແປງອົງກອນຂອງຕົນເອງ ໃຫ້ເຂົ້າກັບສະພາບແວດລ້ອມໃໝ່ ຫຼື ອາດຈະເນື່ອງມາຈາກ ການທີ່ອົງກອນເຄີຍມີຄວາມສຳເລັດທີ່ຍິ່ງ

ໃຫຍ່ໃນອະດີດມາກ່ອນແລ້ວ ຈຶ່ງເປັນສາເຫດໃຫ້ຜູ້ບໍລິຫານດັ່ງກ່າວບໍ່ຄິດຢາກປ່ຽນແປງ ຫຼື ຍ້ອນຍັງມີຄວາມເຊື່ອວ່າ ມັນກໍດີຢູ່ແລ້ວ ຈະຕ້ອງໄປປ່ຽນແປງເຮັດຫຍັງ? ສຸດທ້າຍອົງກອນເຫຼົ່ານັ້ນ ກໍອາດຈະໄປບໍ່ລອດ ຄືດັ່ງ ທ່ານ ໂຈເອລ໌ ບາຣ໌ເກີ (Joel Barker) ກ່າວວ່າ "**ຄວາມສໍາເລັດໃນອະດີດຂອງທ່ານ ຈະມາເປັນຕົວທີ່ກີດຂວາງວິໄສທັດຂອງທ່ານເອງໃນອະນາຄົດ**" ຫຼື "**Your successful past will block your visions of future**". ດັ່ງນັ້ນ ອົງກອນທີ່ຈະຢູ່ລອດໄດ້ ທ່າມກາງແຫ່ງການປ່ຽນແປງໃໝ່ນີ້ ກໍຄືອົງກອນທີ່ຮູ້ຈັກປັບຕົວ ເພື່ອການປ່ຽນແປງ ຫຼື **ປ່ຽນແປງກ່ອນທີ່ຈະເກີດການປ່ຽນແປງ** ຄືດັ່ງເພິ່ນວ່າ "**ວິທີຮັບມືກັບການປ່ຽນແປງທີ່ໄດ້ຜົນທີ່ສຸດ ກໍຄືຊ່ວຍກັນສ້າງຄວາມປ່ຽນແປງຂຶ້ນມາ**" ຍ້ອນວ່າ "**ໂອກາດມັກຈະເຂົ້າຂ້າງຜູ້ທີ່ຄິດວາງແຜນໄວ້ລ່ວງໜ້າຢູ່ສະເໝີ**".

ສະນັ້ນ ປຶ້ມເຫຼັ້ມນີ້ ກໍເປັນປຶ້ມອີກເຫຼັ້ມໜຶ່ງ ທີ່ຂ້າພະເຈົ້າໄດ້ທຸ້ມເທເຫື່ອແຮງເຂົ້າໃນການຄົ້ນຄວ້າ ແລະ ຮິບໂຮມເອົາຄວາມຮູ້ກ່ຽວກັບປະຊາຄົມເສດຖະກິດອາຊຽນ ລວມທັງບັນດາທິດສະດີ, ຫຼັກການ ແລະ ກໍລະນີສຶກສາຂອງບໍລິສັດທີ່ປະສົບຄວາມສໍາເລັດ ເຊັ່ນ: ບໍລິສັດ ໂຕໂຢຕ້າ ໂດຍໄດ້ຮັບການຊ່ວຍເຫຼືອຈາກຫຼາຍໆທ່ານ ຈາກພາກລັດ ແລະ ເອກະຊົນ ເພື່ອຊ່ວຍໃຫ້ທ່ານເຂົ້າໃຈເລິກເຊິ່ງກ່ຽວກັບອາຊຽນ ແລະ ທັງເປັນແນວທາງ ເພື່ອພັດທະນາອົງກອນຂອງທ່ານ ກ້າວສູ່ຄວາມເປັນເລີດໃນອະນາຄົດ ພ້ອມນີ້ ຂ້າພະເຈົ້າຕ້ອງຂໍອະໄພ ດ້ວຍຄວາມຈິງໃຈ, ຖ້າຫາກມີຕົວເລກທາງສະຖິຕິ ຫຼື ເນື້ອໃນບາງສ່ວນຜິດພາດ, ຂ້າພະເຈົ້າຍິນດີ ແລະ ຈິງໃຈຮັບເອົາຄວາມຄິດເຫັນ ແລະ ຄໍາຕໍາໜິຕິຊົມທີ່ມີລັກສະນະສ້າງສັນເພື່ອຈະໄດ້ນໍາໄປປັບປຸງ ແລະ ແກ້ໄຂໃຫ້ດີຂຶ້ນໃນການຈັດພິມຄັ້ງຕໍ່ໄປ.

**ດ້ວຍຄວາມເຄົາລົບ**

**ກາບແກ້ວ ທໍາມະວົງ**

# ສາລະບານ


**ພາກທີ I: ຄວາມຮູ້ທົ່ວໄປ ແລະ ປະຊາຄົມອາຊຽນ .............. 14**

1 ແນວໂນ້ມ 9 ປະການ ທີ່ຈະສົ່ງຜົນຕໍ່ເສດຖະກິດ-ທຸລະກິດໂລກ .. 15
2 ປະຫວັດຄວາມເປັນມາຂອງອາຊຽນ (History of ASEAN) ...... 23
3 ສາມເສົາຄໍ້າຫຼັກໃນປະຊາຄົມອາຊຽນ (3 Pillars of ASEAN) ... 29
4 ແຜນແມ່ບົດ ປະຊາຄົມເສດຖະກິດ ອາຊຽນ (AEC Blueprint) . 32
5 ໂອກາດ ແລະ ສິ່ງທ້າທາຍຂອງ ສປປ ລາວ (Opportunity and Challenge for Laos) ........................................ 36
6 ວິທີກະກຽມຄວາມພ້ອມສໍາລັບຄົນລາວ ແລະ ຫົວໜ່ວຍທຸລະກິດ 39

**ພາກທີ II: 10 ປະເທດ ໃນອາຊຽນ ແລະ ຄູ່ຮ່ວມເຈລະຈາ ... 49**

1 ສປປ ລາວ (Lao PDR) ........................................ 50
2 ປະເທດ ຫວຽດນາມ (Vietnam) ........................................ 54
3 ປະເທດ ກໍາປູເຈຍ (Cambodia) ........................................ 57
4 ປະເທດ ໄທ (Thailand) ........................................ 60
5 ປະເທດ ມຽນມາ (Myanmar) ........................................ 64
6 ປະເທດ ມາເລເຊຍ (Malaysia) ........................................ 67
7 ປະເທດ ສິງກະໂປ (Singapore) ........................................ 70
8 ປະເທດ ອິນໂດເນເຊຍ (Indonesia) ........................................ 74
9 ປະເທດ ຟີລິບປິນ (Philiphines) ........................................ 77
10 ປະເທດ ບຣູໄນ ດາຣູຊາລາມ (Brunei Darussalam) .................. 80
11 ບັນດາປະເທດຄູ່ຮ່ວມເຈລະຈາ (Dialogue Partners) .............. 83

**ພາກທີ III: ກົດ 6 ຂໍ້ ສ້າງອົງກອນໃຫ້ເປັນເລີດຍຸກໃໝ່ ........ 87**

1 ອົງກອນທີ່ເປັນເລີດຍຸກໃໝ່(High Performance Organization) 88

2 **ກົດຂໍ້ທີ 1**: ເນັ້ນທີ່ຜົນໄລຍະຍາວ (Long Term Orientation) ... 92

3 **ກົດຂໍ້ທີ 2**: ໃຫ້ຄວາມສຳຄັນກັບຄຸນນະພາບ (Quality) .......... 96

4 **ກົດຂໍ້ທີ 3**: ເນັ້ນໃສ່ການສ້າງນະວັດຕະກຳ (Innovation) ......... 106

5 **ກົດຂໍ້ທີ 4**: ໃຫ້ຄວາມສຳຄັນກັບລູກຄ້າເປັນອັນດັບໜຶ່ງ (Customer) 122

6 **ກົດຂໍ້ທີ 5**: ລົງທຶນສ້າງຄົນ (Investment in People) .............. 133

7 **ກົດຂໍ້ທີ 6**: ວັດທະນະທຳອົງກອນທີ່ດີ (Organizational Culture) 142

**ພາກທີ IV: ວິຖີສູ່ຄວາມສຳເລັດຂອງ ບໍລິສັດ ໂຕໂຍຕ້າ ....... 154**

1 ວິຖີແຫ່ງ ໂຕໂຍຕ້າ (Toyota Way) ......................................... 155

2 **ຫຼັກການທີ 1**: ຄວາມທ້າທາຍ (Challenge) ............................ 158

3 **ຫຼັກການທີ 2**: ໄຄເຊັນ (Kaizen)........................................ 160

4 **ຫຼັກການທີ 3**: ໄປເບິ່ງໃຫ້ເຫັນກັບຕາ (Genchi Genbutsu) ........ 166

5 **ຫຼັກການທີ 4**: ເຄົາລົບນັບຖືເຊິ່ງກັນແລະກັນ (Mutual Respect). 168

6 **ຫຼັກການທີ 5**: ການເຮັດວຽກເປັນທີມ (Team Work) ................. 172

*i* ***ເອກະສານຊ້ອນທ້າຍ 1: ຫຼັກການ 5 ສໍ (5 S) ............................ 174***

*ii* ***ເອກະສານຊ້ອນທ້າຍ 2: ລະບົບທັນເວລາພໍດີ (Just in Time)... 177***

*iii* ***ເອກະສານຊ້ອນທ້າຍ 3: ຫຼັກການກຳຈັດຂອງເສຍ 7 ຢ່າງ (7 S ) 180***

*iv* *ເອກະສານອ້າງອີງ ........................................ 186*

*v* *ຄຳຂອບໃຈ ................................................ 187*

*vi* *ປະຫວັດຫຍໍ້ຂອງຜູ້ຂຽນ ...................................... 188*

# ພາກທີ: I

# ຄວາມຮູ້ທົ່ວໄປ ແລະ ປະຊາຄົມອາຊຽນ

1. ແນວໂນ້ມ 9 ປະການ ທີ່ຈະສົ່ງຜົນຕໍ່ເສດຖະກິດ-ທຸລະກິດ ໂລກ ຈາກປີ 2013-2023
2. ຄວາມເປັນມາຂອງອາຊຽນ
   **(History of ASEAN)**
3. ສາມເສົາຄ້ຳຫຼັກ ໃນປະຊາຄົມອາຊຽນ
   **(3 Pillars of ASEAN)**
4. ແຜນແມ່ບົດປະຊາຄົມເສດຖະກິດອາຊຽນ
   **(AEC Blueprint)**
5. ໂອກາດ ແລະ ສິ່ງທ້າທາຍຂອງ ສປປ ລາວ
   **(Opportunity and Challenge for Laos)**
6. ວິທີກະກຽມຄວາມພ້ອມສຳລັບຄົນລາວ ແລະ ຫົວໜ່ວຍ ທຸລະກິດ

# 1. ແນວໂນ້ມ 9 ປະການ ທີ່ຈະສົ່ງຜົນຕໍ່ ເສດຖະກິດ-ທຸລະກິດໂລກ ຈາກປີ 2013-2023

ເມື່ອ 475 ປີ ກ່ອນ ຄ.ສ ມີນັກປາດຊາວເກຣັກທີ່ມີຊື່ສຽງ ທ່ານ ເຮີຣັກລິຕຸສ (Heraclitus) ກ່າວໄວ້ວ່າ **"ໃນໂລກນີ້ບໍ່ມີສິ່ງໃດທີ່ແນ່ນອນ, ຍົກເວັ້ນແຕ່ການປ່ຽນແປງເທົ່ານັ້ນທີ່ແນ່ນອນ"** ຫຼື **"There is nothing permanent except change"** ເຊິ່ງເປັນຄຳເວົ້າທີ່ຖືກຕ້ອງ ແລະ ຍັງໃຊ້ໄດ້ໃນທຸກຍຸກທຸກສະໄໝຈົນມາເຖິງປັດຈຸບັນນີ້ ເຖິງວ່າເວລາຈະຜ່ານມາຫຼາຍພັນປີແລ້ວກໍຕາມ ເພື່ອເປັນຄຳເຕືອນໃຫ້ຄົນເຮົາຕ້ອງກະກຽມຄວາມພ້ອມຮັບມືກັບການປ່ຽນແປງຢູ່ຕະຫຼອດເວລາ ໂດຍສະເພາະແມ່ນການປ່ຽນແປງທາງດ້ານເສດຖະກິດ-ສັງຄົມ, ທຸລະກິດລວມທັງດ້ານເທັກໂນໂລຢີຕ່າງໆ ກໍຍິ່ງມີການປ່ຽນແປງໄວກວ່າດ້ານອື່ນໆ ຄືດັ່ງທ່ານ ບິລລ໌ ເກດສ໌ (Bill Gates) ມະຫາເສດຖີອັນດັບໜຶ່ງຂອງໂລກກ່າວວ່າ **"ອີກສິບປີຂ້າງໜ້ານີ້ ທຸລະກິດຈະປ່ຽນແປງໄວຫຼາຍກວ່າຫ້າສິບປີ ທີ່ມັນເຄີຍປ່ຽນແປງມາແລ້ວໃນອະດີດ"** ຫຼື **"Business is going to change more in the next ten years than it has in the last fifty"**. ດັ່ງນັ້ນ ຖ້າເຮົາຍັງຍຶດຕິດກັບວິທີການເຮັດທຸລະກິດໃນແບບເກົ່າໆ ໂດຍບໍ່ສົນໃຈຮຽນຮູ້ວິທີໃໝ່ ແລະ ປັບປຸງປ່ຽນແປງໃຫ້ທັນກັບໂລກສະໄໝໃໝ່ແລ້ວ ທຸລະກິດຂອງເຮົາກໍອາດຈະໄປບໍ່ລອດ ຄືດັ່ງເພິ່ນວ່າ **"ມັນເປັນໄປບໍ່ໄດ້ເລີຍທີ່ຈະເຮັດວຽກໃນມື້ນີ້ ດ້ວຍວິທີການຂອງມື້ວານນີ້ ແລ້ວມື້ອື່ນ ຈະຍັງສືບຕໍ່ເຮັດທຸລະກິດຕໍ່ໄປໄດ້ຢູ່"**. ສະນັ້ນ ເຮົາຈຶ່ງຕ້ອງຮູ້ຈັກວາງແຜນ ເພື່ອຮັບມືກັບສິ່ງທ້າທາຍຕ່າງໆທີ່ອາດຈະເກີດຂຶ້ນໃນອະນາຄົດ ຄືດັ່ງທ່ານ ເຮັນຣີ ລູສ໌ (Henry Luce) ນັກທຸລະກິດທີ່ມີຊື່ສຽງກ່າວວ່າ **"ທຸລະກິດ ກໍຄືການຮັບມືກັບອະນາຄົດຢ່າງຕໍ່ເນື່ອງ ເຊິ່ງເປັນການຝຶກໃຊ້ສັນຊາດຕະຍານຄາດຄະເນລ່ວງໜ້ານັ້ນເອງ"** ໂດຍສະເພາະແມ່ນການຄາດຄະເນເຖິງ**ແນວໂນ້ມແຫ່ງຄວາມ**

**ປ່ຽນແປງທີ່ສຳຄັນ 9 ປະການ (The Nine Mega trends)** ທີ່ກຳລັງເກີດຂຶ້ນ ແລະ ຈະສົ່ງຜົນກະທົບຕໍ່ການເຕີບໂຕ ດ້ານເສດຖະກິດ ແລະ ໂອກາດດ້ານທຸລະກິດໃນທົດສະວັດຕໍ່ໄປ ຫຼື ຈາກປີ 2013 ເຖິງ 2023 ເຊິ່ງ ທ່ານ ຟິລິບ ຄອທເລີ (Philip Kotler) ສຸດຍອດບິດາທາງດ້ານວິຊາການຕະຫຼາດ ທີ່ຖືກສັນລະເສີນໃຫ້ເປັນ 1 ໃນ 6 ຂອງນັກຄິດ ທີ່ມີອິດທິພົນຕໍ່ໂລກຫຼາຍທີ່ສຸດ ໄດ້ເປັນຜູ້ຄາດຄະເນ. ສ່ວນລາຍລະອຽດຂອງແນວໂນ້ມ 9 ປະການ ແມ່ນມີຄືດັ່ງຕໍ່ໄປນີ້:

**1. ການກະຈາຍອຳນາດທາງເສດຖະກິດ ແລະ ຄວາມຮັ່ງມີທົ່ວໂລກໄດ້ປ່ຽນໄປ (Global redistribution of wealth and economic power)**:

ຕັ້ງແຕ່ສັດຕະວັດທີ 15 ເອີຣົບຕາເວັນຕົກໄດ້ກາຍເປັນມະຫາອຳນາດທາງເສດຖະກິດ ເນື່ອງຈາກການໄປລ່າຫາດິນແດນ ເອົາເປັນທົວເມືອງຂຶ້ນ ເຊິ່ງນຳໂດຍ ປະເທດ ອັງກິດ, ໂຮນລັງ, ຝຣັ່ງ, ສະເປນ ແລະ ປັອກຕຸຍການ ທີ່ຄວບຄຸມດິນແດນເກືອບທົ່ວໂລກ ຈົນເຖິງສັດຕະວັດທີ 19 ປະເທດ ສະຫະລັດ ອາເມຣິກາ ກໍກ້າວຂຶ້ນເປັນຜູ້ນຳທາງດ້ານເສດຖະກິດແທນເອີຣົບຕາເວັນຕົກ ເນື່ອງຈາກການຂະຫຍາຍຕົວຂອງເສດຖະກິດພາຍໃນປະເທດເອງ ຈົນເຖິງ ເມື່ອບໍ່ດົນມານີ້ ປະເທດ ສະຫະລັດ ອາເມຣິກາ ກໍເລີ່ມມີບັນຫາທາງດ້ານເສດຖະກິດ ເນື່ອງຈາກພາລະໜີ້ສິນ ຍ້ອນການໃຊ້ຈ່າຍທີ່ຟູມເຟືອຍ ແລະ ເສດຖະກິດກໍຫົດຖອຍຢ່າງຕໍ່ເນື່ອງມາຫຼາຍປີ ຈຶ່ງເຮັດໃຫ້ສູນກາງເສດຖະກິດ ເຄື່ອນຍ້າຍໄປຫາປະເທດຍີ່ປຸ່ນ ແລະ ກໍເຄື່ອນຕໍ່ໄປຫາບັນດາປະເທດຕາເວັນອອກກາງ ທີ່ອຸດົມສົມບູນໄປດ້ວຍຊັບພະຍາກອນນ້ຳມັນ ແລະ ໃນປັດຈຸບັນນີ້ ສູນກາງທາງດ້ານເສດຖະກິດໄດ້ເຄື່ອນມາສູ່ **ສປ ຈີນ, ອິນເດຍ ແລະ ບັນດາປະເທດໃນອາຊຽນຂອງພວກເຮົາ**. ສະນັ້ນ ເມື່ອເສດຖະກິດຂະຫຍາຍຕົວສູງ ຈຶ່ງເຮັດໃຫ້ປະຊາກອນໃນ ສປ ຈີນ, ອິນເດຍ ແລະ ອາຊຽນມີລາຍໄດ້ທີ່ສູງຂຶ້ນ ເຊິ່ງໝາຍເຖິງການມີຄົນລວຍເພີ່ມຂຶ້ນ ແລະ ແນ່ນອນ ມັນກໍຈະສົ່ງຜົນດີຕໍ່ບັນດາທຸລະກິດທີ່ຄ້າຂາຍເຄື່ອງຟູມເຟືອຍຕ່າງໆ ເຊັ່ນ: Louis Vuitton, BMW, Lexus, Rolex, iPhone...

**2. ການປ່ຽນແປງດ້ານຍຸດທະສາດ ຈາກລະດັບໂລກໄປສູ່ລະດັບພາກພື້ນ ແລະ ຈາກພາກພື້ນໄປສູ່ລະດັບທ້ອງຖິ່ນ (Strategic refocusing from global to regional, regional to local)**:

ໃນອະດີດ ບໍລິສັດທີ່ໃຫຍ່ໆມັກຈະຂະຫຍາຍຕະຫຼາດໄປສູ່ພາກພື້ນ ຫຼື ຢູ່ໃນຕົວເມືອງໃຫຍ່ຂອງປະເທດທີ່ມີເສດຖະກິດຂະຫຍາຍຕົວສູງ ຫຼື ມີພົນລະເມືອງທີ່ອາໄສຢູ່ຢ່າງໜາແໜ້ນເທົ່ານັ້ນ. ແຕ່ປັດຈຸບັນນີ້ ບໍລິສັດທີ່ໃຫຍ່ໆເຫຼົ່ານັ້ນ ໄດ້ຮັບໂອກາດດີ ເນື່ອງຈາກເສດຖະກິດໄດ້ມີການຂະຫຍາຍຕົວໄປທົ່ວໂລກ. ສະນັ້ນ ຈຶ່ງເຮັດໃຫ້ພວກເຂົາສາມາດຂະຫຍາຍຕະຫຼາດ ຈາກຕົວເມືອງໃຫຍ່ທີ່ເປັນເມືອງຫຼວງ ອອກໄປຫາເມືອງອື່ນໆທີ່ມີຂະໜາດນ້ອຍລົງໄປ ໄດ້ອີກດ້ວຍ.

**3. ການຂະຫຍາຍຕົວຂອງຕົວເມືອງ ແລະ ຄວາມຕ້ອງການດ້ານພື້ນຖານໂຄງລ່າງຍັງມີຄວາມຕ້ອງການຢູ່ຕໍ່ໄປ (Continued urbanization and growing infrastructure needs)**:

ບັນດາຕົວເມືອງໃຫຍ່ໆຢູ່ໃນແຕ່ລະປະເທດທົ່ວໂລກ ຍັງຈະສືບຕໍ່ຂະຫຍາຍເປັນຕົວເມືອງໃຫຍ່ຂຶ້ນໄປອີກ ແລະ ປະຊາກອນຢູ່ໃນຕົວເມືອງໃຫຍ່ໆເຫຼົ່ານັ້ນ ກໍຍັງຈະສືບຕໍ່ເພີ່ມສູງຂຶ້ນໄປອີກ. ສະນັ້ນ ຈຶ່ງສົ່ງຜົນດີຕໍ່ບັນດາບໍລິສັດກໍ່ສ້າງຕ່າງໆ ລວມທັງທຸລະກິດທີ່ກ່ຽວຂ້ອງກັບພື້ນຖານໂຄງລ່າງ ເຊັ່ນ: ດ້ານພະລັງງານໄຟຟ້າ, ນ້ຳປະປາ, ວັດສະດຸອຸປະກອນຕ່າງໆ ຍ້ອນຄວາມຈຳເປັນໃນການກໍ່ສ້າງອາຄານ ແລະ ຖະໜົນຫົນທາງ ເປັນຈຳນວນຫຼາຍ ລວມທັງສະບຽງອາຫານ.

**4. ວິທະຍາສາດ ແລະ ເທັກໂນໂລຍີ ຈະຊ່ວຍສ້າງໂອກາດໃຫ້ທຸລະກິດຫຼາຍຂຶ້ນ (Growing number of opportunities arising out of science and technology)**:

ໃນປະຈຸບັນນີ້ ໂລກຂອງພວກເຮົາຍັງເຕັມໄປດ້ວຍບັນຫາທີ່ຈະຕ້ອງແກ້ໄຂ ໂດຍສະເພາະແມ່ນບັນຫາເກົ່າ ເຊັ່ນ: ບັນຫາຄວາມທຸກຍາກ, ການຂາດເຂີນນ້ຳສະອາດ, ມົນລະພິດທາງອາກາດ, ບັນຫາໂລກຮ້ອນ ລວມທັງຄວາມຕ້ອງການຂອງຜູ້ບໍລິໂພກທີ່ປ່ຽນໄປ ທີ່ຕ້ອງການວັດຖຸຫຼາຍຂຶ້ນ ແລະ ຄວາມຕ້ອງການດ້ານ

ອາລົມທີ່ຫຼາກຫຼາຍ. ສະນັ້ນ ຈຶ່ງສົ່ງຜົນດີຕໍ່ທຸລະກິດດ້ານວິທະຍາສາດ, ບໍລິສັດທີ່ມີເທັກໂນໂລຍີທີ່ກ້າວໜ້າ, ຢາຮັກສາໂຣກຕ່າງໆ, ອາຫານເພື່ອສຸຂະພາບ ລວມທັງພະລັງງານທີ່ເປັນທາງເລືອກໃນຮູບແບບໃໝ່. ຈຶ່ງບໍ່ແປກໃຈເລີຍວ່າ ປັດຈຸບັນນີ້ ສິງກະໂປ, ສ. ເກົາຫຼີ ແລະ ຍີ່ປຸ່ນ ແມ່ນກຳລັງສົ່ງເສີມການພັດທະນາດ້ານເທັກໂນໂລຍີຊີວະພາບ (Bio-technology) ຕ່າງໆ ຢ່າງແຂ່ງຂັນທີ່ສຸດ.

**5. ການເລັ່ງເຂົ້າສູ່ເສດຖະກິດລະດັບໂລກ ທີ່ໃຫ້ຄວາມສຳຄັນກັບສິ່ງແວດລ້ອມ (Acceleration of the green global economy):**

ເນື່ອງຈາກມີການຕັດໄມ້ທຳລາຍປ່າ ແລະ ການຂຸດຄົ້ນຊັບພະຍາກອນທຳມະຊາດຢ່າງບໍ່ມີແບບແຜນ ຈຶ່ງສົ່ງຜົນກະທົບຕໍ່ສິ່ງແວດລ້ອມໃຫ້ເຊື່ອມໂຊມລົງໄວກວ່າໃນອະດີດ, ເຮັດໃຫ້ເກີດມົນລະພິດທາງອາກາດ, ໂລກຮ້ອນຂຶ້ນ, ນ້ຳທະເລສູງຂຶ້ນ ແລະ ການຂາດເຂີນຊັບພະຍາກອນທີ່ຈຳເປັນທາງທຳມະຊາດ. ສະນັ້ນ ທຸລະກິດທີ່ກ່ຽວກັບການສົ່ງເສີມສິ່ງແວດລ້ອມຈະໄດ້ຮັບຜົນດີ ເຊັ່ນ: ພະລັງງານທີ່ສະອາດ, ພະລັງງານແສງຕາເວັນ, ລົມ ແລະ ລົດທີ່ໃຊ້ໄຟຟ້າ ລວມທັງລົດລູກປະສົມ ຫຼື Hybrid Car ທີ່ໃຊ້ທັງນ້ຳມັນ ແລະ ໄຟຟ້າ ລວມທັງບໍລິສັດທີ່ມີໂຄງການຊ່ວຍອະນຸລັກສິ່ງແວດລ້ອມຕ່າງໆ ແມ່ນຈະໄດ້ປະໂຫຍດສູງ.

**6. ຄ່ານິຍົມໃນສັງຄົມມີການປ່ຽນແປງຢ່າງວ່ອງໄວ (Rapidly changing social values):**

ເນື່ອງຈາກຊີວິດຂອງຄົນເຮົາໃນປັດຈຸບັນນີ້ ແມ່ນມີຄວາມສະດວກສະບາຍເພີ່ມຫຼາຍຂຶ້ນກວ່າເກົ່າ ຍ້ອນການດຳລົງຊີວິດຢູ່ໃນຍຸກດິຈິຕອນ ແລະ ການຕິດຕໍ່ສື່ສານທີ່ສະດວກສະບາຍ ຜ່ານ ອີເມວ (Email), ເຟສບຸກ (Facebook), ກູເກີ (Google), ຢູທູບ (Youtube)...ຈຶ່ງເຮັດໃຫ້ຄົນເຮົາຕິດນິດໄສແຫ່ງຄວາມສະບາຍ ແລະ ວ່ອງໄວ ລວມທັງມັກຄວາມເປັນອິດສະຫຼະ, ມີໂລກສ່ວນຕົວຫຼາຍຂຶ້ນອີກ, ບາງຄັ້ງກໍເສບຕິດໂລກຂໍ້ມູນຂ່າວສານ ຫຼື ສື່ສັງຄົມອອນລາຍຕ່າງໆ (Social Media) ຫຼາຍຈົນເກີນໄປ ເຊັ່ນ: ຄົນທີ່ນອນຢູ່ໃນເຮືອນຫຼັງດຽວກັນ ກໍໃຊ້ໂທລະສັບ ຫຼື ສົ່ງຂໍ້ຄວາມຕິດຕໍ່ຫາກັນ ແທນທີ່ຈະຍ່າງໄປເອີ້ນກັນກໍໄດ້ ຫຼື ອາດ

# ຂໍໂທດຫຼາຍໆ



ປຶ້ມຫົວດັ່ງກ່າວ ຍັງບໍ່ສາມາດນຳ
ມາເຜີຍແຜ່ໄດ້ ເນື່ອງຈາກຍັງບໍ່
ໄດ້ຮັບການອະນຸຍາດໃຫ້ເຜີຍແຜ່
ໄດ້ຢ່າງເປັນທາງການເທື່ອ...

ດ້ວຍຄວາມຮັກແພງ